ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫລວງວຽງຈັນ

ເລກທີ ......250......./ກປ.ນວ

ວັນທີ .......27 JAN 2016.......

## ແຈ້ງການ

ຮຽນ: ທ່ານ ຫົວໜ້າ ຫ້ອງການກະສິກຳ ແລະ ປ່າໄມ້ 9 ຕົວເມືອງ, ຫົວໜ້າ ຂະແໜງລ້ຽງສັດ ແລະ ການປະມົງ ແລະ ຜູ້ປະກອບການລ້ຽງສັດປີກແບບເປັນຟາມ ໃນນະຄອນຫຼວງວຽງຈັນ.

ເລື່ອງ: ໃຫ້ນຳໃຊ້ກາຈ້ຳໄຂ່ຄືນໃໝ່ ຂອງຊາວກະສິກອນ ແລະ ຜູ້ປະກອບການລ້ຽງໄກ່ພັນໄຂ່ ແລະ ເປັດໄຂ່ແບບເປັນຟາມ.

- ອີງຕາມ ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ, ສະບັບ ເລກທີ 08/ສພຊ,ລົງ ວັນທີ 25 ກໍລະກົດ 2008.
- ອີງຕາມ ດຳລັດດ້ວຍ ການຄຸ້ມຄອງການເຄື່ອນຍ້າຍສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ,ເລກທີ 230/ລບ, ວັນທີ 4 ມິຖຸນາ 2012
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ເລກທີ 2200/ກປ,ລົງວັນທີ 14 ສິງຫາ /2012. ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກກະສິກຳ ແລະ ປ່າໄມ້ປະຈຳນະຄອນຫຼວງ.

ປະຈຸບັນໃນນະຄອນຫຼວງວຽງຈັນ ມີຊາວກະສິກອນ ແລະ ຜູ້ປະກອບການໄດ້ລົງທືນໃສ່ການລ້ຽງສັດແບບເປັນຟາມເປັນຕົ້ນແມ່ນການລ້ຽງສັດປີກ (ໄກ່ພັນໄຂ່ ແລະ ເປັດພັນໄຂ່) ເຊິ່ງໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ ເພື່ອຕອບສະໜອງໄຂ່ໃຫ້ພຽງພໍກັບຄວາມຕ້ອງການຂອງຜູ້ບໍລິໂພກໃນນະຄອນຫຼວງວຽງຈັນ ແລະ ຜະລິດເປັນສິນຄ້າສົ່ງອອກຕ່າງແຂວງໄດ້ໂດຍພື້ນຖານ. ນອກຈາກນັ້ນຍັງມີປະກົດການລັກລອບນຳເຂົ້າຜະລິດຕະພັນສັດປີກ ເປັນຕົ້ນແມ່ນໄຂ່ໄກ່ ແລະ ໄຂ່ເປັດ ຈາກຕ່າງປະເທດ ເຊິ່ງເຮັດໃຫ້ມີຜົນກະທົບຕໍ່ການຜະລິດພາຍໃນ ແລະ ມີຜະລິດຕະພັນໄຂ່ບໍ່ມີຄຸນນະພາບທີ່ເຂົ້າມາປົນກັບໄຂ່ຢູ່ພາຍໃນ ເຊິ່ງອາດຈະເຮັດໃຫ້ຜະລິດຕະພັນໄຂ່ດັ່ງກ່າວສົ່ງຜົນສະທ້ອນຕໍ່ສຸຂະພາບຂອງຜູ້ບໍລິໂພກ.

ເພື່ອຢັ້ງຢືນເຖິງແຫຼ່ງທີ່ມາຂອງຜະລິດຕະພັນສັດ ທັງຮັບປະກັນວຽກງານການລ້ຽງສັດປີກ ແລະ ການກວດກາອະນາໄມຜະລິດຕະພັນໄຂ່ ໃຫ້ມີຄຸນນະພາບ ແລະ ເພື່ອສາມາດຄຸ້ມຄອງກວດກາ ການນຳເຂົ້າ - ສົ່ງອອກ ໄປຕ່າງແຂວງໃຫ້ຖືກຕ້ອງຕາມລະບຽບການເຄື່ອນຍ້າຍ ແລະ ທັງປົກປ້ອງການຜະລິດພາຍໃນໃຫ້ມີຄວາມເຂັ້ມແຂງ. ໄຂ່ດັ່ງກ່າວ ມີຄວາມຈຳເປັນຕ້ອງມີເຄື່ອງໝາຍທີ່ບົ່ງບອກວ່າຟາມລ້ຽງໄກ່ພັນໄຂ່ ແລະ ເປັດພັນໄຂ່ ມີການລ້ຽງທີ່ດີມີຜົນຜະລິດ ມີຄຸນນະພາບ,ພະແນກກະສິກຳ ແລະ ປ່າໄມ້ນະຄອນຫຼວງ ຈຶ່ງໄດ້ສະເໜີ ອະນຸຍາດຄືອດກາຈ້ຳໄຂ່ ເພື່ອນຳໄປມອບໃຫ້ຊາວກະສິກອນ ແລະ ຜູ້ປະກອບການລ້ຽງໄກ່ພັນໄຂ່ ແລະ ລ້ຽງເປັດພັນໄຂ່ ແບບເປັນຟາມ ໂດຍຕິດພັນກັບການຂຶ້ນທະບຽນຟາມລ້ຽງສັດຢ່າງຖືກຕ້ອງຕາມລະບຽບການ.

**ພະແນກກະສິກຳ ແລະ ປ່າໄມ້ນະຄອນຫຼວງວຽງຈັນ ຈຶ່ງອອກແຈ້ງການດັ່ງນີ້:**

1. ມອບໃຫ້ ຫົວໜ້າ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ແລະ ຫົວໜ້າ ຂະແໜງລ້ຽງສັດ ແລະ ການປະມົງ ແຕ່ງໜ່ວຍງານຕາມສາຍຕັ້ງຂອງຕົນ ປະສານສົມທົບກັນ ລົງກວດກາຄືນ ບັນດາຟາມລ້ຽງໄກ່ພັນໄຂ່ ແລະ ເປັດພັນໄຂ່ ມີຟາມໃດແດ່ທີ່ເຄີຍໄດ້ຮັບກາຈ້ຳໄຂ່ ແລະໄດ້ເຮັດໃບທະບຽນຟາມ.
2. ມອບໃຫ້ ຫົວໜ້າ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ແລະ ຫົວໜ້າ ຂະແໜງລ້ຽງສັດ ແລະ ການປະມົງ ເຜີຍແຜ່ລະບຽບກົດໝາຍ ແລະ ນິຕິກຳຕ່າງໆກ່ຽວ ກັບການລ້ຽງສັດ ໃຫ້ຊາວກະສິກອນ ຜູ້ລ້ຽງສັດປີກແບບເປັນຟາມ ຮັບຮູ້ ແລະ ເຂົ້າໃຈຂັ້ນຕອນການລ້ຽງ ຈົນເຖິງຂັ້ນຕອນການອອກ ຈຳໜ່າຍຜະລິດຕະພັນສັດປີກ ແລະ ຜະລິດຕະພັນໄຂ່.
3. ມອບໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ປະສານສົມທົບກັບຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ແຕ່ງຕັ້ງ ແລະ ມອບໝາຍໃຫ້ໜ່ວຍງານລ້ຽງສັດ ຂອງຕົນລົງເຮັດທະບຽນຟາມ ແລະ ມອບກາຈ້ຳໄຂ່ໃຫ້ຊາວກະສິກອນ ແລະ ຜູ້ປະກອບການທີ່ລ້ຽງໄກ່ພັນໄຂ່ ແລະ ເປັດພັນໄຂ່.
4. ຫຼັງຈາກມອບກາຈ້ຳໄຂ່ໃຫ້ຜູ້ລ້ຽງສັດປີກແລ້ວ ມອບໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ແຕ່ງຕັ້ງໜ່ວຍງານຂອງຕົນ ລົງຕິດຕາມ ກວດກາ ຄຸນນະພາບໄຂ່ ການຢັ້ງຢືນການນຳໃຊ້ກາຈ້ຳໄຂ່, ທະບຽນຟາມ ໃນເວລາເຄື່ອນຍ້າຍ ແລະ ບ່ອນຈຳໜ່າຍ ເພື່ອຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກໃຫ້ມີປະສິດທິຜົນ.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງທ່ານ ເພື່ອຊາບ ແລະ ນຳໄປຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສູງ.

<u>ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ.</u>໒໕

ຮສ.ດຣ ລິນຄຳ ດວງສະຫວັນ

ບ່ອນສົ່ງ

| | | |
|---|---|---|
| 1. ເຈົ້າຄອງ,ຮອງເຈົ້າຄອງ ... | 4 ສະບັບ | ( ໃຊ້ຕາງບົດລາຍງານ ) |
| 2. ຫ້ອງການກະຊວງກະສິກຳ ແລະ ປ່າໄມ້ | 1 ສະບັບ | ( ໃຊ້ຕາງບົດລາຍງານ ) |
| 3. ກົມລ້ຽງສັດ ແລະ ການປະມົງ | 1 ສະບັບ | ( ໃຊ້ຕາງບົດລາຍງານ ) |
| 4. ເຈົ້າເມືອງ 9 ຕົວເມືອງ | 9 ສະບັບ | ( ເພື່ອຊາບ ) |
| 5. ຫ້ອງວ່າການນະຄອນຫຼວງວຽງຈັນ | 1 ສະບັບ | ( ເພື່ອຊາບ ) |
| 6. ຫ້ອງການກະສິກຳ ແລະ ປ່າໄມ້ 9 ເມືອງ | 9 ສະບັບ | ( ເພື່ອຈັດຕັ້ງປະຕິບັດ ) |
| 7. ຂະແໜງລ້ຽງສັດ ແລະ ການປະມົງ | 1 ສະບັບ | ( ເພື່ອຈັດຕັ້ງປະຕິບັດ ) |
| 8. ເກັບມ້ຽນ | 1 ສະບັບ | |